ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

****

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ

VIENTIANE CENTER
ວຽງຈັນເຊັ້ນເຕີ

ເລກທີ.....011...../ວຈຊຕ
ນະຄອນຫຼວງວຽງຈັນ, ວັນທີ: 17...APR...2025

ຮຽນ: ທ່ານ ຫົວໜ້າ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ທີ່ນັບຖື.

ທ່ານ ຜູ້ອຳນວຍການໃຫຍ່ຕະຫຼາດຫຼັກຊັບລາວ ທີ່ນັບຖື.

ບັນດາຜູ້ຖືຮຸ້ນຂອງບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ ທີ່ນັບຖື.

ເລື່ອງ: ແຈ້ງມະຕິກອງປະຊຸມສາມັນ ສະພາບໍລິຫານຂອງບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ ຄັ້ງທີ 2 ປະຈຳປີ 2025

- ອີງຕາມຂໍ້ຕົກລົງຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ ສະບັບ ເລກທີ 27/ຄຄຊ, ລົງວັນທີ 29 ມີນາ 2022.

- ອີງຕາມລະບຽບຂອງຕະຫຼາດຫຼັກຊັບລາວ ວ່າດ້ວຍການເປີດເຜີຍຂໍ້ມູນ ສະບັບເລກທີ 008/ຕລຊ, ລົງວັນທີ 27 ກັນຍາ 2018.

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ (ວຈຊຕ) ຂໍຖືເປັນກຽດແຈ້ງມະຕິຂອງກອງປະຊຸມສາມັນ ສະພາ ບໍລິຫານ ຄັ້ງທີ 2 ປະຈຳປີ 2025 ໃນ ວັນທີ 17 ເມສາ 2025, ເຊິ່ງມີລາຍລະອຽດດັ່ງລຸ່ມນີ້ :

<u>ມະຕິ 01:</u> ເຫັນດີຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2023 ແລະຈະສະເໜີຕໍ່ກອງປະຊຸມ ສາມັນຜູ້ຖືຮຸ້ນປະຈຳປີ ເພື່ອພິຈາລະນາ ແລະ ຮັບຮອງ.

<u>ມະຕິ 02:</u> ເຫັນດີຮັບຮອງບົດລາຍງານການເງິນປະຈຳປີ 2024 ຂອງ ວຈຊຕ ແລະຈະ ສະເໜີຕໍ່ກອງປະຊຸມ ສາມັນຜູ້ຖືຮຸ້ນປະຈຳປີ ເພື່ອພິຈາລະນາ ແລະ ຮັບຮອງ.

<u>ມະຕິ 03:</u> ເຫັນດີຮັບຮອງບົດລາຍງານຜົນການດຳເນີນທຸລະກິດປະຈຳປີ 2024 ແລະ ແຜນການດຳເນີນທຸລະ ກິດ 2025 ຂອງ ວຈຊຕ ແລະຈະ ສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ ເພື່ອພິຈາລະນາ ແລະ ຮັບຮອງ.

<u>ມະຕິ 04:</u> ເຫັນດີຮັບຮອງແຜນການຈັດສັນຜົນກຳໄລສຸດທິ ປະຈຳປີ 2024 ແລະຈະສະເໜີຕໍ່ກອງປະຊຸມສາມັນ ຜູ້ຖືຮຸ້ນປະຈຳປີ ເພື່ອພິຈາລະນາ ແລະ ຮັບຮອງ ໂດຍມີລາຍລະອຽດຄືດັ່ງລຸ່ມນີ້:

1. ແບ່ງເຂົ້າຄັງສະສົມຕາມລະບຽບການ: 10%;

2. ຈ່າຍເງິນປັນຜົນ: 5 ກີບ/ຮຸ້ນ;

3. ແບ່ງສ່ວນທີ່ເຫຼືອເຂົ້າຄັງຂະຫຍາຍທຸລະກິດ;

4. ກຳນົດເອົາວັນທີ 02/05/2025 ເປັນມື້ປິດປຶ້ມທະບຽນຜູ້ຖືຮຸ້ນເພື່ອກຳນົດສິດຂອງຜູ້ຖືຮຸ້ນໃນການຮັບເງິນປັນຜົນ, ມື້ຈ່າຍເງິນປັນຜົນແມ່ນ 28/05/2025;

5. ມອບໃຫ້ຜູ້ອຳນວຍການໃຫຍ່ ເປັນຜູ້ລົງນາມເອກະສານຕ່າງໆທີ່ກ່ຽວກັບການຈ່າຍເງິນປັນຜົນ.

<u>ມະຕິ 05:</u> ເຫັນດີຮັບຮອງການວ່າຈ້າງ ບໍລິສັດ ພຣາຍສວໍເຕີ້ ເຮົ້າສກຸບເປີສ (ລາວ) ຈຳກັດ ຜູ້ດຽວ ເປັນບໍລິສັດ ກວດສອບບັນຊີປະຈຳປີ 2025 ຂອງບໍລິສັດ ໂດຍມີຄ່າບໍລິການກວດສອບເປັນຈຳນວນເງິນ 28.500 ໂດລາ ແລະຈະ ສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ ເພື່ອພິຈາລະນາ ແລະ ຮັບຮອງ.

ດັ່ງນັ້ນ, ຈຶ່ງຮຽນມາຍັງທ່ານເພື່ອຊາບ ແລະ ໃຊ້ຕາງລາຍງານ

ດ້ວຍຄວາມເຄົາລົບ ແລະ ນັບຖືເປັນຢ່າງສູງ

ຜູ້ອຳນວຍການໃຫຍ່/ ສະມາຊິກສະພາບໍລິຫານ

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ
Vientiane Center Lao Public Company

Wang Wei Kun